ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງສາທາລະນະສຸກ

ເລກທີ: 2579 / ກຊສ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2003

# ຂໍ້ກຳນົດວ່າດ້ວຍ

# ການບໍລິຈາກຢາ ແລະ ຜະລິດຕະພັນການແພດ

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດສະບັບເລກທີ 01/ສພຊ, ລົງວັນທີ 08 ເມສາ 2000.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 020/ ນຍ, ລົງວັນທີ 19/03/99 ວ່າ ດ້ວຍການສ້າງຕັ້ງ ແລະ ເຄື່ອນໄຫວຂອງກະຊວງສາທາລະນະສຸກ .
- ອີງຕາມ ນະໂຍບາຍແຫ່ງຊາດດ້ານຢາຂໍ້ 6.31 ກ່ຽວກັບຢາຊ່ວຍເຫຼືອຫລ້າ.
- ອີງຕາມ ການສະເໜີຂອງກົມອາຫານ ແລະ ຢາ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກອອກຂໍ້ກຳນົດ :**

## ໝວດທີ I

## ຫລັກການລວມ

### ມາດຕາ 1. ຈຸດປະສົງ ແລະ ລະດັບຄາດໝາຍ

**1. ຈຸດປະສົງ**

ເພື່ອຄຸ້ມຄອງການບໍລິຈາກຢາ ແລະ ຜະລິດຕະພັນການແພດ ໃຫ້ໄດ້ຮັບຜົນປະໂຫຍດສູງສຸດ ຕາມຈຸດປະສົງຂອງຜູ້ບໍລິຈາກ ແລະສາມາດນຳໄປໃຊ້ໄດ້ໃນການຮັກສາສຸຂະພາບ ຕາມຄວາມຕ້ອງການຂອງຜູ້ຮັບ.

**2. ລະດັບຄາດໝາຍ**

ຢາ ແລະ ຜະລິດຕະພັນການແພດທີ່ບໍລິຈາກນັ້ນຕ້ອງມີຄຸນນະພາບດີ , ສົ່ງເຖິງສະຖານທີ່ ຫຼື ບຸກຄົນທີ່ຕ້ອງການຢ່າງວ່ອງໄວ ແລະ ຢູ່ໃນສະພາບທີ່ດີ.

## ໝວດທີ II

## ການກຳນົດກ່ຽວກັບການບໍລິຈາກ

### ມາດຕາ 2. ການບໍລິຈາກຢາ ແລະ ຜະລິດຕະພັນການແພດ

ການບໍລິຈາກຢາ ແລະ ຜະລິດຕະພັນການແພດ ປະກອບດ້ວຍຈຳນວນ ຫຼື ເປັນຊຸດທີ່ມີຈຸດປະສົງ ເພື່ອນຳໃຊ້ເຂົ້າໃນການຮັກສາສຸຂະພາບ ໂດຍບໍ່ໄດ້ເສຍຄ່າ ແລະ ບໍ່ແມ່ນຮູບແບບຂອງການຄ້າ, ໂດຍທົ່ວໄປແລ້ວແມ່ນມາຈາກອົງການຈັດຕັ້ງຂອງລັດ,ເອກະຊົນທັງພາຍໃນ ແລະຕ່າງປະເທດ.

### ມາດຕາ 3. ການຮັບເອົາການບໍລິຈາກ

ການບໍລິຈາກສາມາດປະຕິບັດໄດ້ ກໍ່ຕໍ່ເມື່ອໄດ້ຮັບການເຫັນດີ ລະຫວ່າງຜູ້ບໍລິຈາກກັບຂະແໜງການສາທາລະນະສຸກເທົ່ານັ້ນ.

### ມາດຕາ 4. ເນື້ອໃນຂອງການຕົກລົງເຫັນດີ

ການຕົກລົງເຫັນດີທີ່ກ່າວໄວ້ໃນ **ມາດຕາ 3** ຂອງຂໍ້ກຳນົດສະບັບນີ້ ຕ້ອງປະກອບດ້ວຍເນື້ອໃນ ດັ່ງຕໍ່ໄປນີ້:

ກ. ຊື່ຂອງຢາປົວພະຍາດ ແລະ ຜະລິດຕະພັນການແພດ

- ສໍາລັບຢາປົວພະຍາດໃສ່ຊື່ການຄ້າ ແລະ ຊື່ເອກະພາບສາກົນ ສໍາລັບອຸປະກອນການແພດ ຫຼື ສິ່ງຂອງອື່ນໆ ໃຫ້ພັນລະນາລັກສະນະທົ່ວໄປ ແລະ ຊື່ການຄ້າ( ເຊັ່ນ:ກ້ອງຖ່າຍລັງສີສໍາລັບນໍາໃຊ້ໃນຂະແໜງທັນຕະແພດຍີ່ຫໍ້ " Philips " ຫຼື " Dentogram " ເປັນຕົ້ນ ) .

ຂ. ປະລິມານ ຫຼື ຈໍານວນຂອງແຕ່ລະຜະລິດຕະພັນທີ່ຈະສະໜອງ.

ຄ. ຮູບແບບຂອງຢາ ແລະ ຄວາມແຮງຂອງຢາ (ເຊັ່ນ: ຢາເມັດ 50 ມກ, ຢາສັກ 100 ມກ ແລະ ອື່ນໆ ) ຫຼື ກໍານົດໝາຍເຕັກນິກສະເພາະຂອງສິນຄ້າ (ເຊັ່ນ: ຟິມຖ່າຍຮູບຍີ່ຫໍ້ Kodak ຊະນິດ XR 245).

ງ. ຫົວໜ່ວຍມັດຫໍ່ (ເຊັ່ນ: ກັບ ຫຼື ຖົງ 1000 ເມັດ, ຫໍ່ສໍາລັບໃຊ້ສ່ອນຕົວ ແລະ ອື່ນໆ...)

ຈ. ອາຍຸການນໍາໃຊ້ຂອງແຕ່ລະຢາ ຫຼື ຂອງຜະລິດຕະພັນໃດໜຶ່ງທີ່ມີອາຍຸການນໍາໃຊ້ສັ້ນ(ຕົວຢ່າງ :ຟິມຮູບ, ຊຸດບົ່ງມະຕິພະຍາດເປັນຕົ້ນ).

ສ. ການຄາດຄະເນເວລາ ແລະ ເສັ້ນທາງທີ່ຈະສົ່ງສິນຄ້າມາຮອດ ສປປລາວ ຫຼື ປາຍທາງບ່ອນທີ່ຮັບການບໍລິຈາກ.

ຊ. ບັນຫາອື່ນໆ ທີ່ຍົກຂຶ້ນໂດຍຜູ້ບໍລິຈາກ ຫຼື ຜູ້ທີ່ຈະຮັບການບໍລິຈາກເຊັ່ນ :

ເອກະສານທີ່ສະແດງວ່າຜະລິດຕະພັນເຫຼົ່ານັ້ນ ສາມາດຂາຍໄດ້ຢ່າງຖືກຕ້ອງ ຕາມກົດໝາຍພາຍໃນປະເທດຕົ້ນກໍາເນີດຂອງການບໍລິຈາກ.

**ມາດຕາ 5. ການນໍາເຂົ້າ ແລະ ການກວດກາ**

ການບໍລິຈາກພາຍໃນ ຫຼື ຕ່າງປະເທດທີ່ໄດ້ຕົກລົງກັນແລ້ວນັ້ນ ຈະອະນຸຍາດໃຫ້ນໍາເຂົ້າມາໃນ ສປປ ລາວໄດ້, ກໍຕໍ່ເມື່ອ ມີການຕົກລົງເຫັນດີຕາມທີ່ໄດ້ລະບຸໄວ້ໃນມາດຕາ 4 ຂອງຂໍ້ກໍານົດສະບັບນີ້. ໃນເວລາຢາ ຜະລິດຕະພັນການແພດມາຮອດດ່ານສປປລາວ ຕ້ອງໄດ້ຮັບການກວດກາຈາກເຈົ້າໜ້າທີ່ສາທາລະນະສຸກປະຈໍາດ່ານ.

## ໝວດທີ III
## ພັນທະໃນການບໍລິຈາກ

**ມາດຕາ 6. ພັນທະຂອງຜູ້ບໍລິຈາກ**

**1. ການກະກຽມການບໍລິຈາກ**

ຢາປົວພະຍາດ ຫຼື ຜະລິດຕະພັນການແພດທີ່ຈະບໍລິຈາກນັ້ນ ຕ້ອງມີອາຍຸການນໍາໃຊ້ຢ່າງຕໍ່າ 12 ເດືອນຂຶ້ນໄປນັບແຕ່ມື້ນໍາເຂົ້າມາ ສປປ ລາວ (ຍົກເວັ້ນກໍລະນີພິເສດ). ຜະລິດຕະພັນການແພດບາງຊະ ນິດສາມາດນໍາໃຊ້ໄດ້ຫຼາຍປີ, ຖ້າແມ່ນຜະລິດຕະພັນການແພດມືສອງ ຕ້ອງມີໃບຢັ້ງຢືນວ່າຜະລິດຕະພັນເຫຼົ່ານັ້ນຍັງຢູ່ໃນສະພາບດີ ແລະ ໃຊ້ງານໄດ້. ຜູ້ບໍລິຈາກຕ້ອງສະໜອງແຕ່ຜະລິດຕະພັນທີ່ສາມາດຊອກຫາເຄື່ອງອາໄຫຼ່ ແລະ ສ້ອມແປງໄດ້.

**2. ການຕິດສະຫຼາກ ຫຼື ປ້າຍໃສ່ຫີບຫໍ່ໃຫຍ່**

- ການຕິດສະຫຼາກ ຄວນບົ່ງບອກເຖິງລັກສະນະຂອງຜະລິດຕະພັນຢ່າງຈະແຈ້ງ ໂດຍສະເພາະ ແມ່ນຜູ້ຜະລິດ ແລະ ອາຍຸການນໍາໃຊ້;
- ເມື່ອໃດຢາ ຫຼື ຜະລິດຕະພັນການແພດທີ່ບັນຈຸໃນຫົວໜ່ວຍມັດຫໍ່ນ້ອຍແຕ່ຖືກມັດຫໍ່ຄືນໃນຫີບໃຫຍ່, ຕ້ອງຂຽນສະຫລາກເປັນພາສາອັງກິດ ຫຼື ພາສາຝຣັ່ງໃສ່ຂ້າງນອກຂອງຫີບຫໍ່ໃຫຍ່;
- ເມື່ອໃດຢາຫາກສະໜອງໃນຫົວໜ່ວຍມັດຫໍ່ສະເພາະໃຫ້ຄົນເຈັບໂດຍກົງ, ຢາເຫລົ່ານັ້ນຕ້ອງຕິດສະຫລາກສະເພາະແຕ່ລະກັບ, ດີແທ້ຄວນຕິດສະຫຼາກເປັນພາສາລາວ ຍິ່ງເປັນການດີ;
- ເມື່ອໃດຫາກມີການສະໜອງຜະລິດຕະພັນການແພດ, ການສະໜອງນັ້ນຕ້ອງຮັບປະກັນວ່າ ຄູ່ມືການນໍາໃຊ້ຍັງຄົບຖ້ວນ ແລະ ຜະລິດຕະພັນເຫຼົ່ານັ້ນຍັງສາມາດນໍາໃຊ້ ແລະ ບໍາລຸງຮັກສາໄດ້ຢ່າງມີປະສິດທິຜົນ.

**3. ຊຸດການຜະລິດ**

ຢາທີ່ບໍລິຈາກ ຄວນຢູ່ໃນຊຸດຜະລິດດຽວກັນ.

**4. ການຫຸ້ມຫໍ່**

ຢາ ຫຼື ຜະລິດຕະພັນການແພດທີ່ບໍລິຈາກ ຕ້ອງຫຸ້ມຫໍ່ເປັນຢ່າງດີ ເພື່ອປ້ອງກັນການກະທົບ, ຖືກຄວາມຊຸ່ມ ຫຼື ແສງແດດ ເພື່ອຮັບປະກັນໃຫ້ຢາ ຫຼື ຜະລິດຕະພັນການແພດດັ່ງກ່າວຢູ່ໃນສະພາບທີ່ດີເມື່ອໄປເຖິງຜູ້ຮັບ;

ຢາ ແລະ ສິ່ງຂອງບາງຊະນິດທີ່ມີຄວາມຈຳເປັນຕ້ອງຫຸ້ມຫໍ່ ແລະ ເກັບມ້ຽນຮັກສາຢູ່ໃນເງື່ອນໄຂພິເສດ ເຊັ່ນ: ນ້ຳຢາບົ່ງມະຕິ ແລະ Vaccine ຕ້ອງເກັບຮັກສາໄວ້ໃນອຸນຫະພູມຕ່ຳ ແລະ ຢູ່ໃນສະຫຼາກຕ້ອງບົ່ງບອກຈະແຈ້ງກ່ຽວກັບເງື່ອນໄຂການເກັບຮັກສາ ແລະ ການຂົນສົ່ງ .

**5. ເຄື່ອງອາໄຫຼ່ປ່ຽນແທນ**

ສິ່ງຂອງທີ່ບໍລິຈາກຫາກເປັນເຄື່ອງອຸປະກອນການແພດ ຫຼື ເຄື່ອງຈັກ, ເພື່ອຮັບປະກັນອາຍຸການນຳໃຊ້ໃຫ້ຍາວນານ, ຄວນປະກອບເຄື່ອງອາໄຫຼ່ປ່ຽນແທນທີ່ຈຳເປັນນັ້ນໃຫ້ພ້ອມ.

**ມາດຕາ 7. ພັນທະຂອງຜູ້ຮັບບໍລິຈາກ**

1. ຕ້ອງປະຕິບັດຕາມເນື້ອໃນຂອງສັນຍາທີ່ໄດ້ຕົກລົງກັນແລ້ວ;
2. ຕ້ອງສົ່ງສິ່ງຂອງທີ່ບໍລິຈາກນັ້ນໄປເຖິງສະຖານທີ່ ຫຼື ທ້ອງຖິ່ນບ່ອນທີ່ເປັນເປົ້າໝາຍຂອງການບໍລິຈາກ;
3. ຮັບປະກັນການຍົກເວັ້ນພາສີ ແລະ ຄ່າຜ່ານດ່ານທາງການຕ່າງໆ (ໃນກໍລະນີການບໍລິຈາກຈາກ ຕ່າງ ປະເທດ );
4. ຕ້ອງລາຍງານໃຫ້ຜູ້ບໍລິຈາກຊາບ ພາຍຫຼັງໄດ້ຮັບພາຍໃນ 90 ວັນ.

**ມາດຕາ 8. ຈຸດປະສານງານຂອງການບໍລິຈາກ**

ຈຸດປະສານງານຂອງການບໍລິຈາກຢູ່ໃນ ສປປ ລາວ ແມ່ນກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ.

## ໝວດທີ IV
## ການຍ້ອງຍໍຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 9. ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງພາຍໃນ ແລະ ຕ່າງປະເທດ ຫາກໄດ້ປະຕິບັດຕາມເນື້ອໃນຂອງຂໍ້ກຳນົດສະບັບນີ້ ຈະໄດ້ຮັບການພິຈາລະນາຍ້ອງຍໍ ແລະ ຊົມເຊີຍຕາມຄວາມເໝາະສົມ.

**ມາດຕາ 10. ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ , ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກບໍ່ປະຕິບັດຕາມຂໍ້ກຳນົດສະບັບນີ້ ຈະໄດ້ຖືກກ່າວເຕືອນ ແລະ ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນຈາກການບໍລິຈາກນັ້ນ.

## ໝວດທີ V
## ການຈັດຕັ້ງປະຕິບັດ

**ມາດຕາ 11.** ມອບໃຫ້ກົມອາຫານແລະຢາ, ກົມປິ່ນປົວ, ພະແນກສາທາລະນະສຸກແຂວງ, ນະຄອນ ຫຼວງວຽງຈັນ, ເຂດພິເສດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງພ້ອມກັນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ ຢ່າງມີປະສິດທິຜົນ.

**ມາດຕາ 12** ຂໍ້ກຳນົດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ ຫຼື ແຈ້ງການຕ່າງໆ ທີ່ປະກາດໃຊ້ໃນເມື່ອກ່ອນຫາກຂັດກັບຂໍ້ກຳນົດສະບັບນີ້ ລ້ອນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ